ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0333 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 22 ມີນາ 2022

# ຂໍ້ຕົກລົງ
# ວ່າດ້ວຍ ລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການນຳເຂົ້າ ຫຼື ສົ່ງອອກ

- ອີງຕາມ ດຳລັດວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ ເລກທີ 114/ລບ, ລົງວັນທີ 06 ເມສາ 2011;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງ ກົມການນຳເຂົ້າ ແລະ ສົ່ງອອກ ເລກທີ 1058/ກຂອ, ລົງວັນທີ 22 ມີນາ 2022.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອຜັນຂະຫຍາຍ ມາດຕາ 11 ຂອງດຳລັດວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ ເລກທີ 114/ລບ, ລົງວັນທີ 06 ເມສາ 2011.

### ມາດຕາ 2 ລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການນຳເຂົ້າ ຫຼື ສົ່ງອອກ

ລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການນຳເຂົ້າ ຫຼື ສົ່ງອອກ ແມ່ນລາຍການສິນຄ້າທີ່ຕ້ອງໄດ້ຂໍອະນຸຍາດນຳຂະແໜງການທີ່ຄຸ້ມຄອງສິນຄ້າດັ່ງກ່າວກ່ອນ ຈຶ່ງສາມາດດຳເນີນການນຳເຂົ້າ ຫຼື ສົ່ງອອກໄດ້.

ຜູ້ນຳເຂົ້າ ຫຼື ຜູ້ສົ່ງອອກສິນຄ້າດັ່ງກ່າວ ຕ້ອງຍື່ນຄຳຮ້ອງຕໍ່ຂະແໜງການກ່ຽວຂ້ອງ ກ່ອນຈະນຳເຂົ້າ ຫຼື ສົ່ງອອກສິນຄ້າແຕ່ລະຄັ້ງ ພ້ອມປະກອບເອກະສານໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້.

ຂະແໜງການທີ່ອອກອະນຸຍາດສາມາດປະຕິເສດການຮ້ອງຂໍໄດ້ ໃນກໍລະນີທີ່ເຫັນວ່າການນຳເຂົ້າດັ່ງກ່າວ ຫາກຈະສົ່ງຜົນກະທົບຢ່າງຮ້າຍແຮງຕໍ່ຄວາມໝັ້ນຄົງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ເພື່ອປົກປ້ອງຊີວິດ ຫຼື ສຸຂະພາບຄົນ ແລະ ປົກປັກຮັກສາສິ່ງແວດລ້ອມ.

### ມາດຕາ 3 ຕາຕະລາງລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການນຳເຂົ້າ ຫຼື ສົ່ງອອກ

ຕາຕະລາງລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການນຳເຂົ້າ ຫຼື ສົ່ງອອກ ແມ່ນອີງຕາມເລກລະຫັດສິນຄ້າ ຊຶ່ງໄດ້ຈັດແບ່ງເປັນ ສອງ ຕາຕະລາງ ຄື: ຕາຕະລາງລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນ ການນຳເຂົ້າ ແລະ ຕາຕະລາງລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການສົ່ງອອກ ໂດຍມີລາຍລະອຽດດັ່ງນີ້:

## 1. ຕາຕະລາງລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການນຳເຂົ້າ

| ລ/ດ | ເລກລະຫັດສິນຄ້າ | ລາຍການສິນຄ້າ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການອອກອະນຸຍາດ |
|---|---|---|---|---|---|
| 01 | 9302<br>9303<br>9304 | ປືນ ແລະ ລູກປືນ ສຳລັບໃຊ້ໃນການຝຶກຊ້ອມ ແລະ ແຂ່ງຂັນກິລາ | ເພື່ອຄວາມປອດໄພຂອງປະຊາຊົນ ແລະ ຄວາມໝັ້ນຄົງຂອງຊາດ | ແຈ້ງການກ່ຽວກັບການນຳເຂົ້າປືນ ແລະ ລູກປືນ ສຳລັບການກິລາ ເລກທີ 799/ປກສ, ລົງວັນທີ 13 ມິຖຸນາ 2012. | ກົມໃຫຍ່ພະລາທິການ<br>(ກະຊວງປ້ອງກັນຄວາມສະຫງົບ) |
| 02 | 3601<br>3602<br>3603<br>3604 | ວັດຖຸທາດລະເບີດທີ່ໃຊ້ໃນອຸດສາຫະກຳ:<br>- ທາດລະເບີດ;<br>- ອຸປະກອນລະເບີດ;<br>- ວັດຖຸລະເບີດ;<br>- ດອກໄມ້ໄຟ;<br>- ວັດຖຸດິບຜະລິດລະເບີດ;<br>- ອຸປະກອນຜະລິດລະເບີດ. | ເພື່ອຄວາມປອດໄພຂອງປະຊາຊົນ ແລະ ຄວາມໝັ້ນຄົງຂອງຊາດ | - ຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງ ແລະນຳໃຊ້ທາດລະເບີດ ຢູ່ ສປປ ລາວ ເລກທີ 39/ນຍ, ລົງວັນທີ 12 ກໍລະກົດ 2001;<br>- ຂໍ້ຕົກລົງກ່ຽວກັບການຄຸ້ມຄອງວັດຖຸທາດລະເບີດອຸດສາຫະກຳ ເລກທີ 2450/ກປທ, ລົງວັນທີ 05 ສິງຫາ 2010;<br>- ຂໍ້ກຳນົດກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ວັດຖຸລະເບີດພົນລະເຮືອນຂອງບັນດາໂຄງການ ແລະ ຫົວໜ່ວຍຕ່າງໆ ທີ່ມີການນຳໃຊ້ວັດຖຸລະເບີດພົນລະເຮືອນ ເລກທີ 042/ກອຊ, ລົງວັນທີ 05 ພະຈິກ 2008;<br>- ແຈ້ງການກ່ຽວກັບຂັ້ນຕອນ ແລະ ບ່ອນຮັບອະນຸມັດນຳເຂົ້າສົ່ງອອກວັດຖຸລະເບີດ ແລະ ວັດຖຸຮັບໃຊ້ການຜະລິດລະເບີດອຸດສາຫະກຳ ເລກທີ 249/ກອຊ, ລົງວັນທີ 08 ພະຈິກ 2011;<br>- ບົດແນະນຳກ່ຽວກັບລະບຽບການຂໍອະນຸຍາດນຳເຂົ້າວັດຖຸທາດລະເບີດອຸດສາຫະກຳ ເລກທີ 109/ກອຊ, ລົງວັນທີ 29 ພຶດສະພາ 2012. | ກົມອຸດສາຫະກຳປ້ອງກັນຊາດ,<br>ກົມໃຫຍ່ເຕັກນິກກອງທັບ<br>(ກະຊວງປ້ອງກັນປະເທດ) |
| 03 | 7108 | ຄຳທີ່ລາກົບນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ ເຊັ່ນ: ຄຳແທ່ງ, ຄຳເມັດ, ເງິນແທ່ງ ແລະ ເງິນເມັດ ທີ່ບໍ່ເປັນຮູບປະພັນ (ຄຳແທ່ງ 99,99%) | ເພື່ອຮັບປະກັນສະຖຽນລະພາບທາງດ້ານເງິນຕາ ແລະ ຄວາມໝັ້ນຄົງທາງດ້ານເສດຖະກິດ | - ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;<br>- ຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກຄຳ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ ເລກທີ 461/ທຫລ, ລົງວັນທີ 03 ມິຖຸນາ 2019. | ກົມນະໂຍບາຍເງິນຕາ<br>(ທະນາຄານ ແຫ່ງ ສປປ ລາວ) |
| 04 | 9504 | ເຄື່ອງຫຼິ້ນເກມການພະນັນທຸກປະເພດ ເຊັ່ນ: ຕູ້ສະຫລອດມາຊີນ (Slot Machine), ເຄື່ອງໝູນກາຊິໂນຣູເລັດ (Roulett) ແລະ ຕູ້ເກມອື່ນໆ ທີ່ເປັນເກມກາຊິໂນ | ເພື່ອຮັບປະກັນຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຄຸ້ມຄອງການນຳເຂົ້າໃຫ້ຖືກເປົ້າໝາຍການນຳໃຊ້ | ຂໍ້ກຳນົດວ່າດ້ວຍການຄຸ້ມຄອງ ແລະ ກວດກາ, ອະນຸຍາດຫຼິ້ນເກມທຸກປະເພດ ຢູ່ ສປປ ລາວ ເລກທີ 664/ຖວ, ລົງວັນທີ 22 ຕຸລາ 2003. | ກົມວັດທະນະທຳມະຫາຊົນ<br>(ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ) |
| 05 | 9018-9023 | ຢາ ແລະ ຜະລິດຕະພັນການແພດ | ເພື່ອຄວາມປອດໄພຕໍ່ສຸຂະພາບຂອງຜູ້ຊົມໃຊ້ | - ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ (ສະບັບປັບປຸງ) ເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;<br>- ແຈ້ງການກ່ຽວກັບການປະກອບເອກະສານຂໍອະນຸມັດນຳເຂົ້າວັດຖຸດິບ, ອຸປະກອນບັນຈຸ, ຢາປົວພະຍາດ ແລະ ອຸປະກອນການແພດ ມາຮັບໃຊ້ການຜະລິດ ແລະ ເພື່ອຈຳໜ່າຍ ເລກທີ 2660/16.ກອຢ, ລົງວັນທີ 16 ມິຖຸນາ 2016. | ກົມອາຫານ ແລະ ຢາ<br>(ກະຊວງສາທາລະນະສຸກ) |
| 06 | - | ຢາເສບຕິດ ແລະ ວັດຖຸອອກລິດຕໍ່ຈິດ-ປະສາດ | ເພື່ອເປັນການຄຸ້ມຄອງການນຳໃຊ້ໃຫ້ຖືກເປົ້າໝາຍ | - ກົດໝາຍວ່າດ້ວຍຢາເສບຕິດ ເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007;<br>- ດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຢາເສບຕິດ ເລກທີ 076/ນຍ, ລົງວັນທີ 20 ມີນາ 2009;<br>- ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຢາ ຫຼື ສານເສບຕິດ, ອອກລິດຕໍ່ຈິດ-ປະສາດ ແລະ ສານເຄມີຕົ້ນ ເລກທີ 456/ກຊສ,ລົງວັນທີ 19 ເມສາ 2006;<br>- ຂໍ້ຕົກລົງວ່າດ້ວຍບັນຊີປະເພດຢາເສບຕິດ, ວັດຖຸອອກລິດຕໍ່ຈິດ-ປະສາດ ແລະ ສານເຄມີຕົ້ນ ເລກທີ 08/ກຊສ, ລົງວັນທີ 04 ມັງກອນ 2005. | ກົມອາຫານ ແລະ ຢາ<br>(ກະຊວງສາທາລະນະສຸກ) |

| ລ/ດ | ເລກລະຫັດສິນຄ້າ | ລາຍການສິນຄ້າ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການອອກອະນຸຍາດ |
| --- | --- | --- | --- | --- | --- |
| 07 | 8701.20<br>8702<br>8703<br>8704<br>8705<br>8711 | ພາຫະນະທາງບົກທຸກປະເພດທີ່ແລ່ນດ້ວຍເຄື່ອງຈັກ (ເປັນຄັນ ຫຼື CBU) ແບ່ງອອກເປັນ ສອງປະເພດ ຄື:<br>ກ) ທີ່ມີສອງ ຫຼື ສາມລໍ້;<br>ຂ) ທີ່ມີສີ່ລໍ້ຂຶ້ນໄປ. | ເພື່ອຮັບປະກັນແຫຼ່ງທີ່ມາ ແລະ ສະກັດກັ້ນການນຳເຂົ້າພາຫະນະ ທີ່ບໍ່ຖືກກົດໝາຍ | - ດຳລັດວ່າດ້ວຍການຄຸ້ມຄອງທຸລະກິດຍານພາຫະນະທາງບົກ ເລກທີ 470/ລບ, ລົງວັນທີ 27 ທັນວາ 2019;<br>- ຂໍ້ຕົກລົງວ່າດ້ວຍລະບຽບການຂໍອະນຸຍາດນຳເຂົ້າ ແລະ ການຈຳໜ່າຍລົດ ຢູ່ ສປປ ລາວ ເລກທີ 0075/ອຄ.ກຂອ, ລົງວັນທີ 13 ມັງກອນ 2012;<br>- ຂໍ້ຕົກລົງວ່າດ້ວຍການແບ່ງຂັ້ນຄຸ້ມຄອງທຸລະກິດຍານພາຫະນະທາງບົກ ເລກທີ 0023/ອຄ, ລົງວັນທີ 06 ມັງກອນ 2022. | - ກົມການນຳເຂົ້າ ແລະ ສົ່ງອອກ (ປະເພດ ກ ແລະ ຂ);<br>- ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ (ປະເພດ ກ ແລະ ຂ, ສະເພາະປະເພດ ຂ ແມ່ນຍານພາຫະນະປະເພດທີ່ຄະນະກຳມະການລົງທຶນຂັ້ນແຂວງ ອະນຸມັດແຜນນຳເຂົ້າ).<br>(ກະຊວງອຸດສາຫະກຳ ແລະ ການຄ້າ) |
| 08 | 2710.12.11<br>2710.12.14<br>2710.12.20<br>2710.19.71<br>2710.19.79<br>2710.19.83 | ຜະລິດຕະພັນນ້ຳມັນທີ່ນຳໃຊ້ເປັນເຊື້ອເພີງເຜົາໄໝ້:<br>- ນ້ຳມັນແອັດຊັງພິເສດ;<br>- ນ້ຳມັນແອັດຊັງທຳມະດາ;<br>- ນ້ຳມັນກາຊວນ;<br>- ນ້ຳມັນກາດເຮືອບິນ (Jet A-1);<br>- ນ້ຳມັນກາດໄຕ້ (Kerosene);<br>- ນ້ຳມັນເຕົາ. | ເພື່ອຮັບປະກັນແຫຼ່ງທີ່ມາ ແລະ ສະກັດກັ້ນການນຳເຂົ້ານ້ຳມັນເຊື້ອໄຟທີ່ບໍ່ຖືກກົດໝາຍ | - ດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017;<br>- ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດເນື້ອໃນບາງມາດຕາຂອງດຳລັດ 331/ນຍ ເລກທີ 0521/ອຄ.ກຄພນ, ລົງວັນທີ 02 ພຶດສະພາ 2018;<br>- ຂໍ້ຕົກລົງວ່າດ້ວຍການນຳເຂົ້ານ້ຳມັນເຊື້ອໄຟ ແລະ ນ້ຳມັນຫຼໍ່ລື່ນ ເລກທີ 0317/ອຄ, ລົງວັນທີ 21 ມີນາ 2022. | ກົມການນຳເຂົ້າ ແລະ ສົ່ງອອກ<br>(ກະຊວງອຸດສາຫະກຳ ແລະ ການຄ້າ) |
| 09 | 2711 | ອາຍແກັສຫຸງຕົ້ມ (LPG) | ເພື່ອຮັບປະກັນຄວາມໝັ້ນຄົງທາງດ້ານເສດຖະກິດໃຫ້ມີການດຸ່ນດ່ຽງການຊົມໃຊ້, ບໍ່ໃຫ້ເກີດການຂາດແຄນອາຍແກັສ ຈົນເປັນສາເຫດໃຫ້ມີການກັກຕຸນພາໃຫ້ເກີດລາຄາສູງ | - ຂໍ້ຕົກລົງວ່າດ້ວຍລະບຽບການຂໍອະນຸຍາດນຳເຂົ້າ ແລະ ຈຳໜ່າຍອາຍແກັສ ຢູ່ ສປປ ລາວ ເລກທີ 0238/ອຄ.ກຂອ, ລົງວັນທີ 02 ກຸມພາ 2012;<br>- ຂໍ້ກຳນົດວ່າດ້ວຍການຄຸ້ມຄອງການນຳເຂົ້າ ແລະ ຈຳໜ່າຍແກັສຫຸງຕົ້ມ ເລກທີ 0756/ກຄ.ພນ, ລົງວັນທີ 20 ມິຖຸນາ 2001. | ກົມການນຳເຂົ້າ ແລະ ສົ່ງອອກ<br>(ກະຊວງອຸດສາຫະກຳ ແລະ ການຄ້າ) |
| 10 | 0601<br>4401<br>4403<br>4406<br>4407 | ໄມ້ທ່ອນ, ຕໍໄມ້, ປຸກໄມ້, ໄມ້ຕີຕັບ | ເພື່ອຮັບປະກັນຄວາມສອດຄ່ອງກັບລະບຽບຄ້ຳປະກັນໄມ້ທີ່ຖືກກົດໝາຍຂອງ ສປປ ລາວ | - ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;<br>- ຂໍ້ຕົກລົງວ່າດ້ວຍລະບຽບການຂໍອະນຸຍາດນຳເຂົ້າໄມ້ ເລກທີ 0451/ອຄ.ກຂອ, ລົງວັນທີ 01 ມີນາ 2012. | ກົມການນຳເຂົ້າ ແລະ ສົ່ງອອກ<br>(ກະຊວງອຸດສາຫະກຳ ແລະ ການຄ້າ) |
| 11 | 7103.10<br>7103.21<br>7103.31 | ເພັດພອຍ | ເພື່ອສະກັດກັ້ນການຄ້າເພັດພອຍທີ່ບໍ່ຖືກກົດໝາຍ ຕາມລະບຽບການຂອງອົງການຄຸ້ມຄອງການຄ້າ-ຂາຍເພັດພອຍສາກົນ (Kimberley Process - KP) ທີ່ ສປປ ລາວ ເປັນພາຄີ | ຂໍ້ຕົກລົງວ່າດ້ວຍການນຳເຂົ້າ ແລະ ສົ່ງອອກ ເພັດພອຍ ເລກທີ 0224/ອຄ.ກຂອ, ລົງວັນທີ 08 ກຸມພາ 2016. | ກົມການນຳເຂົ້າ ແລະ ສົ່ງອອກ.<br>(ກະຊວງອຸດສາຫະກຳ ແລະ ການຄ້າ) |
| 12 | 1006 | ເຂົ້າ | ເພື່ອຮັບປະກັນຄວາມພຽງພໍທາງດ້ານສະບຽງອາຫານ | ຂໍ້ຕົກລົງວ່າດ້ວຍລະບຽບການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ເຂົ້າ ເລກທີ 0452/ອຄ.ກຂອ, ລົງວັນທີ 01 ມີນາ 2012. | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ<br>(ກະຊວງອຸດສາຫະກຳ ແລະ ການຄ້າ) |
| 13 | - | ເຄມີອັນຕະລາຍປະເພດ ສອງ ແລະ ສາມ ທີ່ມອບໃນບັນຊີເຄມີອຸດສາຫະກຳ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ | ເພື່ອເປັນການຄຸ້ມຄອງການນຳໃຊ້ໃຫ້ຖືກເປົ້າໝາຍ | - ສົນທິສັນຍາວ່າດ້ວຍການເກືອດຫ້າມອາວຸດເຄມີ (Chemical Weapons Convention);<br>- ສົນທິສັນຍາຣອດເຕີດຳ (Rotterdam Convention);<br>- ສົນທິສັນຍາສຕອກໂຮມ (Stockholm Convention);<br>- ອະນຸສັນຍາມົງເຣອານ (Montreal Protocol);<br>- ກົດໝາຍ ວ່າດ້ວຍການຄຸ້ມຄອງເຄມີ ເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016;<br>- ຂໍ້ຕົກລົງວ່າດ້ວຍບັນຊີເຄມີອຸດສາຫະກຳ ເລກທີ 0220/ອຄ.ກອຫ, ລົງວັນທີ 23 ມີນາ 2021; | ກົມອຸດສາຫະກຳ ແລະ ຫັດຖະກຳ<br>(ກະຊວງອຸດສາຫະກຳ ແລະ ການຄ້າ) |

| ລ/ດ | ເລກລະຫັດ ສິນຄ້າ | ລາຍການສິນຄ້າ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການອອກອະນຸຍາດ |
|---|---|---|---|---|---|
| | | | | - ຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ ເລກທີ 1204/ອຄ.ກອຫ, ລົງວັນທີ 24 ທັນວາ 2020;<br>- ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເຄມີພາຍໃຕ້ອະນຸສັນຍາມິງເຣອານ ເລກທີ 1686/ກຊສ, ລົງວັນທີ 07 ເມສາ 2021. | |
| 14 | - | ເຄື່ອງປ່າຂອງດົງ ຕາມບັນຊີ II ຂອງກະຊວງກະສິກຳ ແລະ ປ່າໄມ້ | ເພື່ອປົກປ້ອງທຸກຊະນິດພັນທີ່ຖືກໄພຂົ່ມຂູ່ ແລະ ສ່ຽງຕໍ່ການສູນພັນ | - ສົນທິສັນຍາສາກົນວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງຊາດ (CITES);<br>- ຄຳສັ່ງວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018;<br>- ຂໍ້ຕົກລົງວ່າດ້ວຍການສ້າງ ແລະ ຄຸ້ມຄອງ ສວນສັດ, ຟາມສັດປ່າ, ສູນຟື້ນຟູ ແລະ ຂະຫຍາຍພັນສັດປ່າ ແລະ ສວນພືດປ່າ ເລກທີ 0188/ກປ, ລົງວັນທີ 03 ກຸມພາ 2019;<br>- ຂໍ້ຕົກລົງວ່າດ້ວຍການກຳນົດບັນຊີເຄື່ອງປ່າຂອງດົງ I, II ແລະ III ເລກທີ 0279/ກປ, ລົງວັນທີ 19 ກຸມພາ 2020;<br>- ຂໍ້ຕົກລົງວ່າດ້ວຍການກຳນົດບັນຊີໄມ້ I, II ແລະ III ເລກທີ 0448/ກປ, ລົງວັນທີ 06 ເມສາ 2021. | ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ (ກະຊວງກະສິກຳ ແລະ ປ່າໄມ້) |
| 15 | - | ທຸກຊະນິດສັດນ້ຳ-ສັດປ່າ ແລະ ຊິ້ນສ່ວນຂອງມັນ ຕາມບັນຊີຄຸ້ມຄອງ II ແລະ III ຂອງສົນທິສັນຍາສາກົນ CITES | ເພື່ອໃຫ້ສອດຄ່ອງກັບລະບຽບການ ແລະ ພັນທະສັນຍາ ທີ່ ສປປ ລາວ ມີຕໍ່ອົງການ CITES | - ສົນທິສັນຍາສາກົນວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງຊາດ (CITES);<br>- ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2008;<br>- ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາບັນຊີ ສັດນ້ຳ ແລະ ສັດປ່າ ປະເພດຫວງຫ້າມ ຫຼື ບັນຊີ I ແລະ ປະເພດຄຸ້ມຄອງ ຫຼື ບັນຊີ II ເລກທີ 08/ນຍ, ລົງວັນທີ 25 ກຸມພາ 2021;<br>- ຄຳສັ່ງວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018;<br>- ຂໍ້ຕົກລົງວ່າດ້ວຍການສ້າງ ແລະ ຄຸ້ມຄອງ ສວນສັດ, ຟາມ ສັດປ່າ, ສູນຟື້ນຟູ ແລະ ຂະຫຍາຍພັນສັດປ່າ ແລະ ສວນພືດປ່າ ເລກທີ 0188/ກປ, ລົງວັນທີ 03 ກຸມພາ 2019. | ກົມປ່າໄມ້ (ກະຊວງກະສິກຳ ແລະ ປ່າໄມ້) |
| 16 | 3808 | ຢາປາບສັດຕູພືດອັນຕະລາຍປານກາງ ແລະ ໜ້ອຍ | ເພື່ອປົກປ້ອງສຸຂະພາບ, ຄວາມປອດໄພຂອງຄົນ ແລະ ສິ່ງແວດລ້ອມ ແລະ ເພື່ອສອດຄ່ອງກັບລະບຽບການຂອງສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ | - ສົນທິສັນຍາຣອດເຕີດຳ (Rotterdam Convention);<br>- ສົນທິສັນຍາສຕອກໂຮມ (Stockholm Convention);<br>- ກົດໝາຍວ່າດ້ວຍການຄຸ້ມຄອງເຄມີ ເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016;<br>- ດຳລັດວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017;<br>- ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ໃນ ສປປ ລາວ ເລກທີ 2860/ກປ, ລົງວັນທີ 11 ມິຖຸນາ 2010. | ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ (ກະຊວງກະສິກຳ ແລະ ປ່າໄມ້) |
| 17 | - | ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຍົກເວັ້ນແຮ່ທາດກຳມັນຕະພາບລັງສີ ເຊັ່ນ: ຢູເຣນຽມ ແລະ ທໍຣຽມ | ເພື່ອປົກປ້ອງສຸຂະພາບ, ຄວາມປອດໄພຂອງຄົນ ແລະ ສິ່ງແວດລ້ອມ ແລະ ເພື່ອສອດຄ່ອງກັບລະບຽບການຂອງສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ | - ກົດໝາຍວ່າດ້ວຍແຮ່ທາດ (ສະບັບປັບປຸງ) ເລກທີ 31/ສພຊ, ລົງວັນທີ 03 ພະຈິກ 2017;<br>- ຂໍ້ຕົກລົງວ່າດ້ວຍລະບຽບການຂໍອະນຸຍາດນຳເຂົ້າ ແລະ ສົ່ງ ອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເລກທີ 0352/ພບ, ລົງວັນທີ 13 ມີນາ 2012;<br>- ຂໍ້ຕົກລົງ ວ່າດ້ວຍບັນຊີປະເພດຜະລິດຕະພັນແຮ່ທາດ ສຳລັບອຸດສາຫະກຳບໍ່ແຮ່ ເລກທີ 2406/ພບ, ລົງວັນທີ 04 ທັນວາ 2019;<br>- ແຈ້ງການກ່ຽວກັບຂັ້ນຕອນການສະເໜີແຜນການຈຳໜ່າຍ ແລະ ການຈຳໜ່າຍຜະລິດຕະພັນແຮ່ທາດ ເລກທີ 0011/ກຄຣ3, ລົງວັນທີ 04 ມັງກອນ 2019. | ກົມຄຸ້ມຄອງບໍ່ແຮ່ (ກະຊວງພະລັງງານ ແລະ ບໍ່ແຮ່) |
| 18 | 8517 | - ໂທລະສັບມືຖືຜ່ານດາວທຽມ<br>- ເຄື່ອງຮັບສັນຍານດາວທຽມຂະໜາດນ້ອຍ VSAT | ເພື່ອຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງຊາດ | - ກົດໝາຍວ່າດ້ວຍຄື້ນຄວາມຖີ່ວິທະຍຸສື່ສານ ເລກທີ 17/ສພຊ, ລົງວັນທີ 05 ພຶດສະພາ 2017;<br>- ດຳລັດວ່າດ້ວຍການສື່ສານຜ່ານດາວທຽມ ເລກທີ 471/ລບ, ລົງວັນທີ 27 ທັນວາ 2019. | ກົມຄື້ນຄວາມຖີ່ (ກະຊວງເຕັກໂນໂລຊີ ແລະ ການສື່ສານ) |

## 2.ລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການສົ່ງອອກ

| ລ/ດ | ເລກລະຫັດສິນຄ້າ | ລາຍການສິນຄ້າ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການອອກອະນຸຍາດ |
|---|---|---|---|---|---|
| 01 | 7108 | ຄຳທີ່ລາກົບນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ ເຊັ່ນ: ຄຳແທ່ງ, ຄຳເມັດ, ເງິນແທ່ງ ແລະ ເງິນເມັດ ທີ່ບໍ່ເປັນຮູບປະພັນ (ຄຳແທ່ງ 99,99%) | ເພື່ອຮັບປະກັນສະຖຽນລະພາບທາງດ້ານເງິນຕາ ແລະ ຄວາມໝັ້ນຄົງທາງດ້ານເສດຖະກິດ | - ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;<br>- ຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກຄຳ ທີ່ລາກົບນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ ເລກທີ 461/ທຫລ, ລົງວັນທີ 03 ມິຖຸນາ 2019. | ກົມນະໂຍບາຍເງິນຕາ<br>(ທະນາຄານ ແຫ່ງ ສປປ ລາວ) |
| 02 | 4401<br>4408 - 4421<br>6414<br>9401<br>9403<br>9404 | ຜະລິດຕະພັນໄມ້ທຳມະຊາດ | ເພື່ອຮັບປະກັນຄວາມສອດຄ່ອງກັບລະບຽບຄ້ຳປະກັນໄມ້ທີ່ຖືກກົດໝາຍຂອງ ສປປ ລາວ | - ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;<br>- ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກ ເລກທີ 0851/ອຄ, ລົງວັນທີ 14 ກັນຍາ 2021;<br>- ຄຳແນະນຳກ່ຽວກັບການສົ່ງອອກຜະລິດຕະພັນໄມ້ທຳມະຊາດໄປຕ່າງປະເທດ ເລກທີ 0332/ອຄ, ລົງວັນທີ 22 ມີນາ 2022. | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ<br>(ກະຊວງອຸດສາຫະກຳ ແລະ ການຄ້າ) |
| 03 | 4401<br>4403 - 4421<br>6414<br>9401<br>9403<br>9404 | ໄມ້ປູກ ແລະ ຜະລິດຕະພັນໄມ້ປູກ | ເພື່ອຮັບປະກັນຄວາມສອດຄ່ອງກັບລະບຽບຄ້ຳປະກັນໄມ້ທີ່ຖືກກົດໝາຍຂອງ ສປປ ລາວ | - ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;<br>- ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກ ເລກທີ 0851/ອຄ, ລົງວັນທີ 14 ກັນຍາ 2021;<br>- ຄຳແນະນຳກ່ຽວກັບການສົ່ງອອກໄມ້ປູກໄປຕ່າງປະເທດ ເລກທີ 0981/ອຄ, ລົງວັນທີ 19 ຕຸລາ 2021. | ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ<br>(ກະຊວງອຸດສາຫະກຳ ແລະ ການຄ້າ) |
| 04 | 4402 | ຖ່ານຂາວ | ເພື່ອຮັບປະກັນຄວາມສອດຄ່ອງກັບລະບຽບຄ້ຳປະກັນໄມ້ທີ່ຖືກກົດໝາຍຂອງ ສປປ ລາວ | - ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກ ເລກທີ 0851/ອຄ, ລົງວັນທີ 14 ກັນຍາ 2021;<br>- ຄຳແນະນຳກ່ຽວກັບການຂຸດຄົ້ນ ແລະ ການເຄື່ອນຍ້າຍໄມ້ຕິ້ວ, ການເຄື່ອນຍ້າຍຖ່ານຂາວທີ່ຜະລິດຈາກໄມ້ຕິ້ວ ພາຍໃນ ແລະ ສົ່ງອອກຕ່າງປະເທດ ເລກທີ 0050/ກປ, ລົງວັນທີ 18 ກັນຍາ 2017. | ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ<br>(ກະຊວງກະສິກຳ ແລະ ປ່າໄມ້) |
| 05 | - | ຊັບພະຍາກອນທຳມະຊາດທີ່ເປັນຢາ ທີ່ບໍ່ໄດ້ຮັບການປຸງແຕ່ງ | ເພື່ອປົກປັກ ແລະ ຮັກສາຄວາມຍືນຍົງຂອງຊັບພະຍາກອນທຳມະຊາດ | - ດຳລັດວ່າດ້ວຍຊັບພະຍາກອນທຳມະຊາດທີ່ເປັນຢາ ເລກທີ 155/ນຍ, ລົງວັນທີ 30 ກັນຍາ 2003;<br>- ຄຳສັ່ງແນະນຳວ່າດ້ວຍການຈັດຕັ້ງປະຕິບັດດຳລັດຂອງນາຍົກລັດຖະມົນຕີ ກ່ຽວກັບຊັບພະຍາກອນທຳມະຊາດທີ່ເປັນຢາ ເລກທີ 252/ກຊສ, ລົງວັນທີ 06 ມິຖຸນາ 2007. | ກົມອາຫານ ແລະ ຢາ<br>(ກະຊວງສາທາລະນະສຸກ) |
| 06 | 1006 | ເຂົ້າ | ເພື່ອຮັບປະກັນຄວາມພຽງພໍທາງດ້ານສະບຽງອາຫານ | ຂໍ້ຕົກລົງວ່າດ້ວຍລະບຽບການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ເຂົ້າກິນ ເລກທີ 0452/ອຄ.ກຂອ, ລົງວັນທີ 01 ມີນາ 2012. | ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ<br>(ກະຊວງອຸດສາຫະກຳ ແລະ ການຄ້າ) |
| 07 | 7103.10<br>7103.21<br>7103.31 | ເພັດພອຍ | ເພື່ອສະກັດກັ້ນການຄ້າເພັດພອຍທີ່ບໍ່ຖືກກົດໝາຍຕາມລະບຽບການຂອງອົງການຄຸ້ມຄອງການຄ້າ-ຂາຍເພັດພອຍສາກົນ (Kimberley Process - KP) ທີ່ ສປປ ລາວ ເປັນພາຄີ | ຂໍ້ຕົກລົງວ່າດ້ວຍການນຳເຂົ້າ ແລະ ສົ່ງອອກ ເພັດພອຍ ເລກທີ 0224/ອຄ.ກຂອ, ລົງວັນທີ 08 ກຸມພາ 2016. | ກົມການນຳເຂົ້າ ແລະ ສົ່ງອອກ<br>(ກະຊວງອຸດສາຫະກຳ ແລະ ການຄ້າ) |
| 08 | - | ເຄມີອັນຕະລາຍປະເພດ 2 ແລະ 3 ທີ່ນອນໃນບັນຊີເຄມີອຸດສາຫະກຳ ຂອງກະຊວງອຸດສາຫະກຳ ແລະ ການຄ້າ | ເພື່ອເປັນການຄຸ້ມຄອງການນຳໃຊ້ໃຫ້ຖືກເປົ້າໝາຍ | - ສົນທິສັນຍາວ່າດ້ວຍການເກືອດຫ້າມອາວຸດເຄມີ (Chemical Weapons Convention);<br>- ສົນທິສັນຍາຣອດເຕີດຳ (Rotterdam Convention);<br>- ສົນທິສັນຍາສຕອກໂຮມ (Stockholm Convention);<br>- ອະນຸສັນຍາມົງເຣອານ (Montreal Protocol);<br>- ກົດໝາຍວ່າດ້ວຍການຄຸ້ມຄອງເຄມີ ເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016; | ກົມອຸດສາຫະກຳ ແລະ ຫັດຖະກຳ<br>(ກະຊວງອຸດສາຫະກຳ ແລະ ການຄ້າ) |

| ລ/ດ | ເລກລະຫັດສິນຄ້າ | ລາຍການສິນຄ້າ | ເຫດຜົນການຄຸ້ມຄອງ | ນິຕິກຳອ້າງອີງ | ຂະແໜງການອອກອະນຸຍາດ |
|---|---|---|---|---|---|
| | | | | - ຂໍ້ຕົກລົງວ່າດ້ວຍບັນຊີເຄມີອຸດສາຫະກຳ ເລກທີ 0220/ອຄ.ກອຫ, ລົງວັນທີ 23 ມີນາ 2021;<br>- ຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນບັນຊີເຄມີ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານເຄມີ ເລກທີ 1204/ອຄ.ກອຫ, ລົງວັນທີ 24 ທັນວາ 2020;<br>- ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເຄມີພາຍໃຕ້ອະນຸສັນຍາມົງເຣອານ ເລກທີ 1686/ກຊສ, ລົງວັນທີ 07 ເມສາ 2021. | |
| 09 | - | ເຄື່ອງປ່າຂອງດົງຕາມບັນຊີ II ຂອງກະຊວງກະສິກຳ ແລະ ປ່າໄມ້ | ເພື່ອປົກປັກຮັກສາຊະນິດພັນທີ່ຖືກໄພຂົ່ມຂູ່ ແລະ ສ່ຽງຕໍ່ການສູນພັນ | - ສົນທິສັນຍາສາກົນວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງຊາດ (CITES);<br>- ຄຳສັ່ງວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018;<br>- ຂໍ້ຕົກລົງວ່າດ້ວຍການສ້າງ ແລະ ຄຸ້ມຄອງ ສວນສັດ, ຟາມສັດປ່າ, ສູນຟື້ນຟູ ແລະ ຂະຫຍາຍພັນ ສັດປ່າ ແລະ ສວນພືດປ່າ ເລກທີ 0188/ກປ, ລົງວັນທີ 03 ກຸມພາ 2019;<br>- ຂໍ້ຕົກລົງວ່າດ້ວຍການກຳນົດບັນຊີເຄື່ອງປ່າຂອງດົງ I, II ແລະ III ເລກທີ 0279/ກປ, ລົງວັນທີ 19 ກຸມພາ 2020;<br>- ຂໍ້ຕົກລົງວ່າດ້ວຍການກຳນົດບັນຊີໄມ້ I, II ແລະ III ເລກທີ 0448/ກປ, ລົງວັນທີ 06 ເມສາ 2021. | ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ (ກະຊວງກະສິກຳ ແລະ ປ່າໄມ້) |
| 10 | - | ທຸກຊະນິດສັດນ້ຳ-ສັດປ່າ ແລະ ຊິ້ນສ່ວນຂອງມັນ ຕາມບັນຊີຄຸ້ມຄອງ II ແລະ III ຂອງສົນທິສັນຍາສາກົນ CITES | ເພື່ອໃຫ້ສອດຄ່ອງກັບລະບຽບການ ແລະ ພັນທະສັນຍາ ທີ່ ສປປ ລາວ ມີຕໍ່ອົງການ CITES | - ສົນທິສັນຍາສາກົນວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງຊາດ (CITES);<br>- ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2008;<br>- ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາບັນຊີ ສັດນ້ຳ ແລະ ສັດປ່າ ປະເພດຫວງຫ້າມ ຫຼື ບັນຊີ I ແລະ ປະເພດຄຸ້ມຄອງ ຫຼື ບັນຊີ II ເລກທີ 08/ນຍ, ລົງວັນທີ 25 ກຸມພາ 2021;<br>- ຄຳສັ່ງວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018;<br>- ຂໍ້ຕົກລົງວ່າດ້ວຍການສ້າງ ແລະ ຄຸ້ມຄອງ ສວນສັດ, ຟາມ ສັດປ່າ, ສູນຟື້ນຟູ ແລະ ຂະຫຍາຍພັນສັດປ່າ ແລະ ສວນພືດປ່າ ເລກທີ 0188/ກປ, ລົງວັນທີ 03 ກຸມພາ 2019. | ກົມປ່າໄມ້ (ກະຊວງກະສິກຳ ແລະ ປ່າໄມ້) |
| 11 | - | ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ຍົກເວັ້ນແຮ່ທາດກຳມັນຕະພາບລັງສີ ເຊັ່ນ: ຢູເຣນຽມ ແລະ ທໍຣຽມ | ເພື່ອປົກປ້ອງສຸຂະພາບ, ຄວາມປອດໄພຂອງຄົນ ແລະ ສິ່ງແວດລ້ອມ ແລະ ເພື່ອສອດຄ່ອງກັບລະບຽບການຂອງສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ | - ກົດໝາຍວ່າດ້ວຍແຮ່ທາດ (ສະບັບປັບປຸງ) ເລກທີ 31/ສພຊ, ລົງວັນທີ 03 ພະຈິກ 2017;<br>- ຂໍ້ຕົກລົງວ່າດ້ວຍລະບຽບການຂໍອະນຸຍາດນຳເຂົ້າ ແລະ ສົ່ງອອກ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເລກທີ 0352/ພບ, ລົງວັນທີ 13 ມີນາ 2012;<br>- ຂໍ້ຕົກລົງວ່າດ້ວຍບັນຊີປະເພດຜະລິດຕະພັນແຮ່ທາດ ສຳລັບອຸດສາຫະກຳບໍ່ແຮ່ ເລກທີ 2406/ພບ, ລົງວັນທີ 04 ທັນວາ 2019;<br>- ແຈ້ງການກ່ຽວກັບຂັ້ນຕອນການສະເໜີແຜນການຈຳໜ່າຍ ແລະ ການຈຳໜ່າຍຜະລິດຕະພັນແຮ່ທາດ ເລກທີ 0011/ກຄຣ3, ລົງວັນທີ 04 ມັງກອນ 2019. | ກົມຄຸ້ມຄອງບໍ່ແຮ່ (ກະຊວງພະລັງງານ ແລະ ບໍ່ແຮ່) |

*__ໝາຍເຫດ:__ ສຳລັບສິນຄ້າທີ່ກຳນົດໃນຕາຕະລາງ 1 ແລະ ຕາຕະລາງ 2 ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ທີ່ບໍ່ໄດ້ກຳນົດເລກລະຫັດສິນຄ້າ ຫຼື ກຳນົດແລ້ວ ແຕ່ບໍ່ຈະແຈ້ງ ຫຼື ບໍ່ຄົບຖ້ວນ ແມ່ນຂະແໜງການກ່ຽວຂ້ອງຈະສົມທົບກັບລັດຖະການພາສີໃນການຈັດເລກລະຫັດສິນຄ້າຂອງສິນຄ້າຕົວຈິງ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບເນື້ອໃນລາຍລະອຽດຂອງສິນຄ້າ ຕາມທີ່ໄດ້ກຳນົດໃນສາລະບານອັດຕາພາສີລະບົບເອກະພາບ.*

**ມາດຕາ 4 ການນໍາເຂົ້າ ແລະ ສົ່ງອອກສິນຄ້າທີ່ບໍ່ນອນໃນບັນຊີທີ່ຕ້ອງຂໍອະນຸຍາດກ່ອນການນໍາເຂົ້າ ຫຼື ສົ່ງອອກ**

ສິນຄ້າທີ່ບໍ່ໄດ້ນອນໃນບັນຊີຕ້ອງຂໍອະນຸຍາດກ່ອນການນໍາເຂົ້າ ຫຼື ສົ່ງອອກ ຕາມມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ແມ່ນສາມາດດໍາເນີນຂັ້ນຕອນການແຈ້ງພາສີຢູ່ດ່ານໄດ້ເລີຍ ແຕ່ຕ້ອງປະຕິບັດໃຫ້ສອດຄ່ອງກັບມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ຫຼື ລະບຽບການທາງດ້ານເຕັກນິກ ຂອງຂະແໜງການທີ່ກ່ຽວຂ້ອງຂອງ ສປປ ລາວ ຫຼື ປະເທດປາຍທາງກໍານົດໄວ້ ຊຶ່ງໄດ້ກໍານົດໄວ້ໃນບັນຊີສະເພາະ.

**ມາດຕາ 5 ການປັບປຸງລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການນໍາເຂົ້າ ຫຼື ສົ່ງອອກ**

ການປັບປຸງລາຍການສິນຄ້າທີ່ຕ້ອງຂໍອະນຸຍາດກ່ອນການນໍາເຂົ້າ ຫຼື ສົ່ງອອກ ແມ່ນການເພີ່ມ ຫຼື ຫຼຸດລາຍການທີ່ກໍານົດໄວ້ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້.

ການປັບປຸງແຕ່ລະຄັ້ງ ຕ້ອງໄດ້ຮັບການອະນຸມັດຈາກ ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ຕາມການຄົ້ນຄ້ວາ ແລະ ສະເໜີຂອງພາກສ່ວນທີ່ກ່ຽວຂ້ອງ.

ພາຍຫຼັງທີ່ໄດ້ປັບປຸງຕາຕະລາງລາຍການສິນຄ້າສໍາເລັດແລ້ວ ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງໄດ້ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ຈັດຕັ້ງປະຕິບັດ.

**ມາດຕາ 6 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບປະສິດທິຜົນສູງ.

**ມາດຕາ 7 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ໄດ້ພິມລົງຈົດໝາຍເຫດທາງລັດຖະການສິບຫ້າ ວັນ.

ຂໍ້ຕົກລົງສະບັບນີ້ປ່ຽນແທນ ແຈ້ງການວ່າດ້ວຍລາຍການສິນຄ້າທີ່ຕ້ອງຂໍອະນຸຍາດນໍາເຂົ້າ ຫຼື ສົ່ງອອກແບບອັດຕະໂນມັດ ແລະ ແບບບໍ່ອັດຕະໂນມັດ ເລກທີ 0076/ອຄ.ກຂອ, ລົງວັນທີ 13 ມັງກອນ 2012.

ລັດຖະມົນຕີ

ປອ.ຄໍາແພງ ໄຊສົມແພງ